ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 281 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 06 MAR 2014

# ບົດແນະນຳ
## ວ່າດ້ວຍການຈັດຕັ້ງປະຕິບັດ ລະບຽບວ່າດ້ວຍຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມລະບຽບວ່າດ້ວຍຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ສະບັບເລກທີ 003/ຄຄຊ, ລົງວັນທີ 18 ກຸມພາ 2014.

### ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອອກບົດແນະນຳ:

1. **ຈຸດປະສົງ**

ບົດແນະນຳສະບັບນີ້ ຜັນຂະຫຍາຍ ລະບຽບວ່າດ້ວຍຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ສະບັບເລກທີ 003/ຄຄຊ, ລົງວັນທີ 18 ກຸມພາ 2014 ມາດຕາ 4 ແລະ 5 ເພື່ອເປັນບ່ອນອີງໃຫ້ແກ່ບໍລິສັດຫຼັກຊັບໃນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ແນໃສ່ຮັບປະກັນຄວາມ ຖືກຕ້ອງ, ຄົບຖ້ວນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ.

2. **ອະທິບາຍຄຳສັບ**

1) **"ຄວາມສ່ຽງ"** ໝາຍເຖິງ ປັດໃຈທີ່ອາດຈະເກີດຂຶ້ນໃນອານະຄົດ ທີ່ສ້າງຜົນເສຍຫາຍ ຈາກການເຄື່ອນໄຫວທຸລະກິດຫຼັກຊັບ ຫຼື ການດຳເນີນງານອື່ນໆ ຂອງບໍລິສັດຫຼັກຊັບ ທີ່ສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງບໍລິສັດຫຼັກຊັບ;

2) **"ນ້ຳໜັກຄວາມສ່ຽງ"** ໝາຍເຖິງ ອັດຕາສ່ວນຮ້ອຍ ທີ່ໄດ້ກຳນົດໄວ້ໃນຕາຕະລາງການຄິດໄລ່ຄວາມສ່ຽງຂອງຊັບສິນ **(ຕາຕະລາງ 3)** ເພື່ອນຳໃຊ້ເຂົ້າໃນການຄິດໄລ່ຄວາມສ່ຽງຂອງຊັບສິນແຕ່ລະປະເພດ ທີ່ຢູ່ໃນ ແລະ ນອກໃບສະຫຼຸບຊັບສິນບັດ;

3) **"ຊັບສິນ ແລະ ໜີ້ສິນໄລຍະສັ້ນ"** ໝາຍເຖິງ ຊັບສິນ ແລະ ໜີ້ສິນ ທີ່ສາມາດຊື້-ຂາຍແລກປ່ຽນ ໄດ້ພາຍໃນ ໜຶ່ງປີ.

4) ອົງປະກອບຂອງຊັບສິນ ແລະ ໜີ້ສິນ.

ອົງປະກອບຂອງຊັບສິນ ແລະ ໜີ້ສິນ ທີ່ເອົາມາຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ປະກອບມີ ດັ່ງນີ້:

4.1. **"ຊັບສິນທັງໝົດ"** ແມ່ນໄດ້ຈາກ ຜົນລວມທັງໝົດຂອງຊັບສິນ ທີ່ສະແດງອອກໃນໃບສະຫຼຸບຊັບສິນບັດ ເບື້ອງຊັບສິນ ແຕ່ບໍ່ລວມຊັບສິນ ທີ່ເປັນຂອງລູກຄ້າ;

4.2. **"ຊັບສິນໄລຍະຍາວ "** ປະກອບມີລາຍການ ດັ່ງລຸ່ມນີ້:

1. ຊັບສິນບັດຄົງທີ່;
2. ເງິນລົງທຶນໄລຍະຍາວ (ຫຼາຍກວ່າ 1 ປີ);
3. ໜີ້ຕ້ອງຮັບໄລຍະຍາວ (ຫຼາຍກວ່າ 1 ປີ;
4. ຊັບສິນອື່ນໆ ທີ່ບໍ່ສາມາດຊື້-ຂາຍແລກປ່ຽນ ພາຍໃນ ໜຶ່ງປີ.

4.3. **"ຊັບສິນໝູນວຽນ"** ປະກອບມີລາຍການ ດັ່ງລຸ່ມນີ້:

1. ເງິນສົດ;
2. ເງິນຝາກທະນາຄານ ແລະ ສະຖາບັນການເງິນ;
3. ເງິນລົງທຶນໄລຍະສັ້ນ;
4. ໜີ້ຕ້ອງຮັບໄລຍະສັ້ນ;
5. ຊັບສິນໝູນວຽນອື່ນໆ ທີ່ສາມາດຊື້-ຂາຍແລກປ່ຽນ ພາຍໃນ ໜຶ່ງປີ.

4.4. **"ໜີ້ສິນທັງໝົດ"** ແມ່ນຜົນລວມຂອງໜີ້ສິນທັງໝົດ ທີ່ສະແດງອອກໃນໃບສະຫຼຸບຊັບສິນບັດ ເບື້ອງໜີ້ສິນ ຂອງ ບໍລິສັດຫຼັກຊັບ ແຕ່ບໍ່ລວມໜີ້ ທີ່ເປັນສ່ວນຂອງລູກຄ້າ;

4.5. **"ໜີ້ສິນໄລຍະຍາວ"** ປະກອບມີລາຍການ ດັ່ງລຸ່ມນີ້:

1. ເງິນກູ້ຢືມໄລຍະຍາວ;
2. ໜີ້ຕ້ອງສົ່ງໄລຍະຍາວລະຫວ່າງບໍລິສັດໃນກຸ່ມ;
3. ໜີ້ຕ້ອງສົ່ງໄລຍະຍາວອື່ນໆ.

5) **"ຄວາມສ່ຽງຂອງຊັບສິນໝູນວຽນ"** ແມ່ນໄດ້ຈາກຜົນລວມ ຂອງແຕ່ລະລາຍການຂອງຊັບສິນໝູນວຽນຕາມມູນຄ່າຕົວຈິງໃນບັນຊີ ຄູນໃຫ້ ນ້ຳໜັກຄວາມສ່ຽງຂອງຊັບສິນໝູນວຽນແຕ່ລະປະເພດ. ລາຍລະອຽດການຄິດໄລ່ຄວາມສ່ຽງຂອງຊັບສິນໝູນວຽນ ໃຫ້ປະຕິບັດຕາມ **(ຕາຕະລາງ 3)** ທີ່ຄັດຕິດບົດແນະນຳສະບັບນີ້.

6) "ອັດຕາສ່ວນຄວາມພຽງພໍຂອງທຶນ (Net Capital Ratio: NCR)" ແມ່ນ ອັດຕາສ່ວນ ທີ່ໄດ້ຈາກການຄິດໄລ່ ດ້ວຍການສົມທຽບລະຫວ່າງ ຊັບສິນໝູນວຽນ ແລະ ໜີ້ສິນໝູນວຽນ ຊຶ່ງຜົນທີ່ໄດ້ຈາກການຄິດໄລ່ ແມ່ນສະແດງເຖິງລະດັບຄວາມສາມາດຊຳລະໜີ້ສິນຂອງບໍລິສັດຫຼັກຊັບ ທີ່ເກີດຈາກການເຄື່ອນໄຫວທຸລະກິດ.

3. **ສູດການຄິດໄລ່ ອັດຕາສ່ວນຄວາມພຽງພໍຂອງທຶນ** (Net Capital Ratio: NCR)).

ບໍລິສັດຫຼັກຊັບ ຕ້ອງປະຕິບັດການຄິດໄລ່ອັດສ່ວນຄວາມພຽງພໍຂອງທຶນ ເປັນປະຈຳທຸກໆວັນລັດຖະການ ໂດຍໃຫ້ເອົາມູນຄ່າຕົວຈິງຕາມໃບສະຫຼຸບຊັບສິນບັດໃນມື້ເຮັດບົດລາຍງານ ແລະ ປະຕິບັດຕາມສູດຄິດໄລ່ ດັ່ງລຸ່ມນີ້:

$$\text{NCR} = \frac{\text{ຊັບສິນທັງໝົດ - ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ - ຊັບສິນໄລຍະຍາວ - ໜີ້ສິນທັງໝົດ.}}{\text{ໜີ້ສິນທັງໝົດ - ໜີ້ສິນໄລຍະຍາວ + ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສິນບັດ.}}$$

4. ບໍລິສັດຫຼັກຊັບ ຕ້ອງປະຕິບັດການຄິດໄລ່ ຕາມແບບໃບລາຍງານການຄິດໄລ່ **(ແບບລາຍງານ 1)** ທີ່ໄດ້ຄັດຕິດມານຳບົດແນະນຳສະບັບນີ້ ແລ້ວລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແຕ່ລະກໍລະນີດັ່ງນີ້:

**4.1. ການລາຍງານແບບປົກກະຕິ**

**4.1.1.** ຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ທີ່ຫຼາຍກວ່າ ຫຼື ເທົ່າກັບ ຊາວສ່ວນຮ້ອຍ (≥ 20%) ໃຫ້ບໍລິສັດຫຼັກຊັບສືບຕໍ່ຄິດໄລ່ເປັນແຕ່ລະວັນ ແລະ ລາຍງານຜ່ານທາງເອເລັກໂຕຣນິກ (E-mail) ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນວັນລັດຖະການຖັດໄປ. ສຳລັບທີ່ຢູ່ E-mail ທີ່ຈະນຳໃຊ້ໃນການຮັບບົດລາຍງານ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະມີແຈ້ງການສະເພາະຫາບໍລິສັດຫຼັກຊັບ ໃນແຕ່ລະໄລຍະ;

**4.1.2.** ສົ່ງຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນຕາມ ຂໍ້ 4.1.1 ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນລາຍເດືອນ ພາຍໃນກຳນົດເວລາ ສິບຫ້າວັນ ຂອງເດືອນຖັດໄປ.

**4.2. ການລາຍງານແບບກະທັນຫັນ**

**4.2.1.** ຜົນການຄິດໄລ່ຕໍ່າກວ່າຊາວສ່ວນຮ້ອຍ ແຕ່ສູງກວ່າ ສິບສອງສ່ວນຮ້ອຍ (≥12 - < 20%) ບໍລິສັດຫຼັກຊັບຕ້ອງລາຍງານພາຍໃນກຳນົດເວລາ ສອງວັນ ນັບແຕ່ວັນທີ່ອັດຕາສ່ວນຄວາມພຽງພໍຂອງທຶນຕໍ່າກວ່າ ຊາວສ່ວນຮ້ອຍ ແລະ ສືບຕໍ່ລາຍງານທຸກໆວັນ ແຕ່ຖ້າອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ສິບສອງສ່ວນຮ້ອຍ (< 12%) ບໍລິສັດຫຼັກຊັບ ຕ້ອງລາຍງານພາຍໃນກຳນົດເວລາ ໜຶ່ງວັນ ລັດຖະການຖັດໄປ ແລະ ລາຍງານທຸກໆວັນ ຈົນກວ່າ ບໍລິສັດຫຼັກຊັບ ສາມາດແກ້ໄຂອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ຢູ່ໃນລະດັບສູງກວ່າ ຫຼື ເທົ່າ

ກັບ ຊາວສ່ວນຮ້ອຍ (≥ 20%) ເປັນເວລາຢ່າງໜ້ອຍ ຫ້າວັນ ຕິດຕໍ່ກັນ ນັບແຕ່ວັນອັດຕາສ່ວນຄວາມພຽງພໍຂອງທຶນສູງກວ່າ ຫຼື ເທົ່າກັບ ຊາວສ່ວນຮ້ອຍ (≥ 20%);

4.2.2. ບໍລິສັດຫຼັກຊັບ ທີ່ມີອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າຊາວສ່ວນຮ້ອຍ (< 20%) ຕ້ອງສົ່ງແຜນການແກ້ໄຂໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນກໍານົດເວລາ ສິບວັນ ນັບແຕ່ວັນອັດຕາສ່ວນຄວາມພຽງພໍຂອງທຶນຕໍ່າກວ່າ ຊາວສ່ວນຮ້ອຍ ຍົກເວັ້ນ ພາຍໃນກໍານົດເວລາ ສິບວັນ ດັ່ງກ່າວ ບໍລິສັດຫຼັກຊັບສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບສູງກວ່າ ຫຼື ເທົ່າກັບ ຊາວສ່ວນຮ້ອຍ (≥ 20%). ແຜນການແກ້ໄຂ ຕ້ອງຖືກປະຕິບັດໃຫ້ສໍາເລັດພາຍໃນກໍານົດເວລາ ເກົ້າສິບວັນ ນັບແຕ່ວັນທີ່ອັດຕາສ່ວນຄວາມພຽງພໍຂອງທຶນຕໍ່າກວ່າຊາວສ່ວນຮ້ອຍ (< 20%).

5. ບໍລິສັດຫຼັກຊັບ ຕ້ອງປະຕິບັດການຄິດໄລ່ ຕາມແບບໃບລາຍງານການຄິດໄລ່ **(ແບບລາຍງານ 1)** ທີ່ໄດ້ຄັດຕິດມານໍາບົດແນະນໍາສະບັບນີ້ ແລ້ວລາຍງານໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນແຕ່ລະກໍລະນີ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 4 ຂອງບົດແນະນໍາສະບັບນີ້.

6. ໃນການລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍລິສັດຫຼັກຊັບ ຕ້ອງຄັດຕິດຕາຕະລາງການຄິດໄລ່ອີງປະກອບ ຂອງຊັບສິນ, ໜີ້ສິນ ແລະ ຄວາມສ່ຽງຂອງຊັບສິນໝູນວຽນ **ຕາມຕະລາງ 1, 2 ແລະ 3** ຕາມລໍາດັບທີ່ໄດ້ຄັດຕິດມານໍາບົດແນະນໍາສະບັບນີ້. ກໍລະນີມີໜີ້ສິນນອກໃບສະຫຼຸບຊັບສິນບັດ ທີ່ຖືກນໍາໃຊ້ເຂົ້າໃນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ກໍ່ໃຫ້ຄັດຕິດເອກະສານດັ່ງກ່າວມາພ້ອມ;

7. ບົດແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ສໍານັກງານ ຄຄຊ

**ວັດທະນາ ດາລາລອຍ**